NSW HEALTH
July 2005
[DOH-7620]

LAO

# ສິ່ງທີ່ຕ້ອງເຮັດເມື່ອເກັບເອົາຂີ້ເທົ່າເພື່ອກວດຫາວັນນະໂຣກ (TB)
# Instructions for Collecting Sputum for Tuberculosis (TB)

ທ່ານຈະຖືກຂໍໃຫ້ເກັບເອົາຕົວຢ່າງເສມຫະ (ຂີ້ເທົ່າ) ໃນຕອນເຊົ້າໆສາມມື້ລຽນ. ເພື່ອຊ່ວຍໃນການເອົາຂີ້ເທົ່ານີ້, ພວກເຮົາໄດ້ເອົາແກ້ວເກັບຕົວຢ່າງໃຫ້ທ່ານສາມແກ້ວແລະຖົງຢາງຖົງນຶ່ງ. ແກ້ວເຫຼົ່ານັ້ນຈະມີປ້າຍຕິດຊື່ທ່ານ ແລະ ມີນຳເບີ "1", "2", ແລະ "3" ຕິດໄວ້, ສຳລັບເກັບຕົວຢ່າງຈາກສາມມື້ລຽນ. *ໂປຼດຣະວັງຢ່າໄປຊູນທາງໃນຂອງແກ້ວບໍ່ວ່າໃນກໍຣະນີໃດໆ.*

**ໂປຼດສັງເກດ:** ເປັນສິ່ງຈຳເປັນທີ່ສຸດທີ່ທ່ານຕ້ອງໄດ້ເອົາເສມຫະ/ຂີ້ເທົ່າ ຈາກປອດ **ບໍ່ແມ່ນ** ນ້ຳລາຍ (ນ້ຳຈາກໃນປາກ) ສຳລັບການກວດນີ້.

**ຖ້າທ່ານມີບັນຫາເຣື່ອງຂາກຂີ້ເທົ່າອອກມາບໍ່ໄດ້** ໃຫ້ເປີດກອັກນ້ຳຮ້ອນຢູ່ໃນຫ້ອງນ້ຳໄວ້ຈົນຫ້ອງອົບໄປດ້ວຍອາຍນ້ຳ. (ໂປຼດຣະມັດຣະວັງຫຼີກເວັ້ນບໍ່ໃຫ້ນ້ຳຮ້ອນລົ້ນແລະລວກຕົນເອງ). ໃຫ້ອັດປະຕູຫ້ອງນ້ຳໄວ້ແລະນັ່ງຢູ່ໃນຫ້ອງທີ່ອົບໄປດ້ວຍອາຍນ້ຳ ເປັນເວລາຫ້າຫາສິບນາທີ, ຈາກນັ້ນໃຫ້ລອງຂາກອີກເທື່ອນຶ່ງ. ອີກວິທີນຶ່ງ, ທ່ານສາມາດລອງອາບນ້ຳອຸ່ນຈາກຝັກບົວ ຫຼື ອາບໃນອ່າງນ້ຳ ກ່ອນລອງໄອເອົາຂີ້ເທົ່າອອກມາ. ການຫັນໃຈບາດເລິກໆໃນຂນະທີ່ໃຊ້ມືບີບທາງຂ້າງຂອງເອິກແຮງໆ, ຕາມດ້ວຍການໄອບາດເລິກໆກໍຊ່ວຍໄດ້ເຊັ່ນດຽວກັນໃນການເຮັດໃຫ້ຂີ້ເທົ່າຂຶ້ນມາເທິງຄໍ.

**ວິທີເຮັດ:**

1. ເມື່ອທ່ານຕື່ນນອນຕອນເຊົ້າແລະກ່ອນກິນອາຫານຫຼືດື່ມນ້ຳຫຼືຖູແຂ້ວ, ໃຫ້ເອົາຕົວຢ່າງຂອງຂີ້ເທົ່າໃສ່ເຂົ້າໄປໃນແກ້ວທີ່ໝາຍເລກ "1" ໄວ້. (ໃຫ້ກວດໃຫ້ແນ່ໃຈວ່າທ່ານບໍ່ໄດ້ຖົ່ມແຕ່ນ້ຳລາຍອອກມາ)
2. ໃຫ້ຂຽນວັນທີ ແລະ ເວລາ ທີ່ເກັບເອົາຕົວຢ່າງຂີ້ເທົ່າ ໃສ່ເທິງແກ້ວທີ່ໝາຍເລກ "1".
3. ກະຣຸນາອັດຝາແກ້ວໃຫ້ແຈບເພື່ອຫຼີກເວັ້ນບໍ່ໃຫ້ແກ້ວຮົ່ວ
4. ໃຫ້ເອົາແກ້ວໃສ່ເຂົ້າໄວ້ໃນຖົງຢາງທີ່ເອົາໃຫ້ທ່ານໄວ້
5. ໃຫ້ເອົາຖົງຢາງທີ່ຫໍ່ແກ້ວຕົວຢ່າງ, ເຂົ້າໄວ້ໃນຕູ້ເຢັນ, **ບໍ່ແມ່ນຖ້ານນ້ຳແຂງ.**
6. ໃຫ້ລົ້ມຂໍ້ 1-5 ໃນອີກສອງມື້ທີ່ຕິດຕໍ່ກັນມາ ໂດຍໃຊ້ແກ້ວ (ທີ່ໝາຍເລກ "2" ແລະ "3" ຕາມລຳດັບ)

**7.** ໃຫ້ເອົາຕົວຢ່າງທັງໝົດກັບໄປໃຫ້ ຄລີນິກກວດໜ້າເອິກ/TB ເອົາໄປທີ່ຜແນກກວດຫາພຍາດ (ໄປຕາມບ່ອນທີ່ທ່ານຖືກແນະນຳໃຫ້ໄປ), ໂດຍໄວເທົ່າທີ່ຈະໄວໄດ້, ຫຼັງຈາກທີ່ເກັບຕົວຢ່າງອັນສຸດທ້າຍໄດ້ແລ້ວ. ໃຫ້ເກັບເອົາຕົວຢ່າງໄວ້ໃນບ່ອນທີ່ເຢັນແລະບໍ່ໃຫ້ຖືກແສງແດດຈົນກວ່າໄດ້ນຳສົ່ງຮອດໂຮງໝໍ.

**ໂປຼດສັງເກດ:** ອາດໃຊ້ເວລາຮອດ 3 ມື້ເຂົ້າການ ຈຶ່ງຈະໄດ້ຜົນການກວດຂັ້ນຕົ້ນ, ແລະ 6-8 ອາທິດເພື່ອຈະໄດ້ຜົນການກວດເບິ່ງເຊື້ອຂັ້ນສຸດທ້າຍ. ພຍາບານປະຈຳຄລີນິກຈະເປັນຄົນບອກທ່ານຖ້າຫາກວ່າມີຫຍັງຜິດປົກກະຕິ.

ຖ້າທ່ານມີຄຳຖາມໃດໆກ່ຽວກັບເຣື່ອງການເກັບເອົາຕົວຢ່າງນີ້, ກະຣຸນາຕິດຕໍ່ໄປຫາຄລີນິກໄດ້ທີ່:

**ຂໍຂອບໃຈ**